



ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

# ສະຖິຕິການນຳເຂົ້າ-ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າຂອງ ສປປ ລາວ ປະຈຳປີ 2018




ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ
ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ

## ກະກຽມ ແລະ ຮຽບຮຽງໂດຍ

### ຄະນະຊີ້ນຳລວມ

| | |
|---|---|
| ທ່ານ ສຸລິຍົນ ພິລາວົງ | ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ນາງ ມະນີວອນ ວົງໄຊ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |
| ທ່ານ ປອ ແກ້ວມໍລະກົດ ສິດລາກອນ | ຮອງຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ |

### ຄະນະກວດແກ້ເນື້ອໃນ ແລະ ຮຽບຮຽງ

| | |
|---|---|
| ທ່ານ ໄຊຍະສອນ ສີລີພົງ | ຮັກສາການແທນຫົວໜ້າພະແນກ<br>ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ໂພໄຊ ອິນທະບົວລີ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ພຸດທະສອນ ທອງມະນີ | ຮອງຫົວໜ້າພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

### ຄະນະອອກແບບ ແລະ ຈັດລຽງ

| | |
|---|---|
| ທ່ານ ວຽງຄຳ ທິບຸນມາ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ຫຸມດາວັນ ຄຳພາສິດ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |
| ທ່ານ ນາງ ລອນຄຳ ຄຳດາລາວົງ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

### ຜູ້ເກັບກຳລາຍລະອຽດ ແລະ ວິເຄາະຂໍ້ມູນ

| | |
|---|---|
| ທ່ານ ນາງ ສຸພາພອນ ທິບພະວົງ | ວິຊາການພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ |

## ຄຳນຳ

ພັກ ແລະ ລັດຖະບານແຫ່ງ ສປປ ລາວ ໄດ້ມີນະໂຍບາຍເພີ່ມທະວີສາຍພົວພັນຮ່ວມມືລະຫວ່າງ ສປປ ລາວ ກັບບັນດາປະເທດຕ່າງໆໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ ໂດຍແນໃສ່ເພີ່ມທະວີສາຍພົວພັນທາງດ້ານເສດຖະກິດ - ການຄ້າ ໂດຍໄດ້ເຂົ້າຮ່ວມເປັນພາຄີສັນຍາ, ສົນທິສັນຍາການຄ້າຕ່າງໆ ທັງໃນຂອບສອງຝ່າຍ, ພາກພື້ນ ແລະ ສາກົນ. ໃນປະຈຸບັນ ສປປ ລາວ ໄດ້ຮັບສິດທິພິເສດທາງດ້ານການຄ້າຈາກທັງໝົດ 57 ປະເທດ. ຊຶ່ງສິດທິພິເສດທາງການຄ້າປະກອບມີ 02 ແບບດ້ວຍກັນຄື: ສິດທິພິເສດທາງການຄ້າແບບຝ່າຍດຽວ (ລະບົບສິດທິພິເສດທົ່ວໄປ: Gerneralized System of Preferences: GSP) ແລະ ສິດທິພິເສດທາງການຄ້າແບບຕອບແທນກັນ (ເຂດການຄ້າເສລີ: Free Trade Area: FTA)

ສິດທິພິເສດທາງການຄ້າແບບຝ່າຍດຽວແມ່ນມີ 42 ປະເທດທີ່ໃຫ້ສິດທິພິເສດທາງການຄ້າແບບຝ່າຍດຽວໃຫ້ແກ່ ສປປ ລາວ ປະກອບດ້ວຍ: ສະຫະພາບເອີຣົບ ຫຼື ອີຢູ 28 ປະເທດ, ສະວິດເຊີແລນ, ການາດາ, ອົດສະຕາລີ, ນິວຊີແລນ, ຕວກກີ, ນອກແວ, ລັດເຊຍ, ເບລາຣຸສ, ກາຊັກສະຖານ, ຍີ່ປຸ່ນ, ສປ ຈີນ, ສ.ເກົາຫຼີ, ອິນເດຍ ແລະ ຈີນ (ໄຕ້ຫວັນ). ສິດທິພິເສດທາງການຄ້າແບບຕອບແທນກັນ ຫຼື ພາຍໃຕ້ຂອບສັນຍາການຄ້າເສລີມີສັນຍາທັງໝົດຈຳນວນ 08 ສະບັບ ລວມມີ 15 ປະເທດ: ສະມາຊິກອາຊຽນ (ບູໄນ, ອິນໂດເນເຊຍ, ມາເລເຊຍ, ຟີລິບປິນ, ສິງກະໂປ, ກຳປູເຈຍ, ໄທ, ມຽນມາ ແລະ ສສ.ຫວຽດນາມ), ປະເທດຄູ່ຮ່ວມ ສປ ຈີນ, ສ.ເກົາຫຼີ, ຍີ່ປຸ່ນ, ອິນເດຍ, ອົດສະຕາລີ ແລະ ນິວຊີແລນ.

ແບບຟອມທີ່ໄດ້ຮັບສິດທິພິເສດທາງການຄ້າທັງໝົດມີ 12 ຟອມ ຄື: A, D, E, S, AANZ, AI, AJ, AK, APTA, DFTP, SPT, ແລະ Co-Korea. ຊຶ່ງບັນດາແບບຟອມດັ່ງກ່າວສາມາດຂໍໄດ້ຈາກທັງໝົດ 36 ຫ້ອງການຄື: ກົມການນຳເຂົ້າ ແລະ ສົ່ງອອກ, ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫຼວງວຽງຈັນ ແລະ ແຂວງໃນຂອບເຂດທົ່ວປະເທດ, ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ, ເຂດເສດຖະກິດພິເສດສະຫວັນ-ເຊໂນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ແຂວງໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ວິທີການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Certificate of Origin: CO) ທີ່ ສປປ ລາວ ນຳໃຊ້ໃນປະຈຸບັນນີ້ມີທັງໝົດ 03 ຮູບແບບດ້ວຍກັນຄື: ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າແບບເຈ້ຍສໍ (Manual), ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຜ່ານທາງລະບົບເອເລັກໂຕຣນິກ (Electronic Certificate of Origin) ແລະ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ (Self Certification).

# ຄຳເຫັນຂອງ ທ່ານ ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ

ພັກ ແລະ ລັດຖະບານຂອງ ສປປ ລາວ ໄດ້ວາງເປົ້າໝາຍເພື່ອເຮັດໃຫ້ ສປປ ລາວ ຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ, ຊຶ່ງແຜນການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດໃນສົກປີ 2018 ທີ່ຜ່ານມານີ້ ລັດຖະບານ ສປປ ລາວ ໄດ້ເນັ້ນໜັກການພັດທະນາເພື່ອຍົກລະດັບຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນລາວໃຫ້ດີຂຶ້ນ. ເພື່ອເປັນການຫຼຸດລະດັບຄວາມແຕກຕ່າງຂອງການພັດທະນາທາງເສດຖະກິດລະຫວ່າງ ປະຊາຊົນໃນເຂດຕົວເມືອງກັບເຂດຊົນນະບົດດ້ວຍການພັດທະນາຢ່າງຮອບດ້ານ. ໂດຍໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກທາງດ້ານການຄ້າຫຼາຍຮູບແບບເຊັ່ນ: ການຫຼຸດຂັ້ນຂອດໃນການດຳເນີນທຸລະກິດໃຫ້ນັບມື້ນັບໜ້ອຍລົງ, ຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກໃຫ້ມີຄວາມໝັ້ນທ່ຽງ ແລະ ໄປພ້ອມກັບການພັດທະນາຊັບພະຍາກອນມະນຸດ. ສຸມໃສ່ຍົກລະດັບຄຸນນະພາບ, ທັກສະ ແລະ ສີມືແຮງງານຂອງຄົນລາວໃຫ້ມີຄວາມພັດທະນາທຽບເທົ່າກັບສາກົນເທື່ອລະກ້າວ, ເນື່ອງຈາກວ່າ ການພັດທະນາສີມືແຮງງານເປັນປັດໄຈຕົ້ນຕໍຂອງການບັນລຸເປົ້າໝາຍການພັດທະນາຢ່າງຍືນຍົງ ແລະ ເປັນເງື່ອນໄຂໃຫ້ແກ່ການຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ.

ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສ້າງປື້ມສະຖິຕິການນຳເຂົ້າ ແລະ ສົ່ງອອກ ພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2018. ການສັງລວມສະຖິຕິໄດ້ສະແດງໃຫ້ເຫັນວ່າ ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄດ້ກວມເອົາ 24.30% ຂອງມູນຄ່າການສົ່ງອອກທັງໝົດ, ສ່ວນການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າແມ່ນ ກວມເອົາພຽງ 10.80% ຂອງການນຳເຂົ້າທັງໝົດ. ຈາກຂໍ້ມູນດັ່ງກ່າວເຫັນໄດ້ວ່າ ສິດທິພິເສດທາງການຄ້າໄດ້ເປີດໂອກາດໃຫ້ແກ່ຜູ້ປະກອບການຢູ່ ສປປ ລາວ ສາມາດເຂົ້າເຖິງຕະຫຼາດຂອງບັນດາປະເທດທີ່ກ່າວມານັ້ນຢ່າງເປັນລະບົບ. ປື້ມສະຖິຕິຫົວນີ້ໄດ້ສ້າງຂຶ້ນມາດ້ວຍຄວາມເອົາໃຈໃສ່, ດ້ວຍຄວາມມຸ່ງຫວັງເພື່ອໃຫ້ຜູ້ນຳໃຊ້ເຂົ້າເຖິງຂໍ້ມູນຕ່າງໆ ແລະ ສາມາດນຳໃຊ້ໄດ້ຮັບຜົນປະໂຫຍດສູງສຸດ.

ຂໍສະແດງຄວາມຂອບໃຈມາຍັງທຸກພາກສ່ວນທີ່ກ່ຽວຂ້ອງທີ່ໄດ້ໃຫ້ການຮ່ວມມືໃນການສະໜອງຂໍ້ມູນສະຖິຕິ ກ່ຽວກັບ ວຽກງານນີ້ດ້ວຍ ໂດຍສະເພາະແມ່ນ ສະຖິຕິສິດທິພິເສດທາງການຄ້າຂາອອກຈາກ 36 ຫ້ອງການ ທີ່ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນຂອບເຂດທົ່ວປະເທດ. ນອກຈາກນັ້ນ, ກໍ່ຍັງໄດ້ຮັບການສະໜອງສະຖິຕິການນຳເຂົ້າຈາກ ກົມພາສີ, ກະຊວງການເງິນ.

ກົມການນຳເຂົ້າ ແລະ ສົ່ງອອກ ຫວັງເປັນຢ່າງຍິ່ງວ່າປື້ມຫົວນີ້ຈະນຳປະໂຫຍດອັນສູງສຸດມາສູ່ບັນດາທ່ານ. ຖ້າມີຂໍ້ຂາດຕົກບົກພ່ອງປະການໃດ ພວກເຮົາຂໍອະໄພມາຍັງນະທີ່ນີ້ດ້ວຍ ແລະ ມີຄວາມຍິນດີຮັບເອົາຄຳຕຳນິຕິຊົມຈາກບັນດາທ່ານ ເພື່ອນຳໄປປັບປຸງໃນການສ້າງປື້ມສະຖິຕິສະບັບຕໍ່ໄປ.

ນະຄອນຫຼວງວຽງຈັນ, ວັນທີ ...... ກໍລະກົດ 2019

**ຫົວໜ້າກົມ**

ສຸລິຍົນ ພິລາວົງ

# ບັນຊີລາຍຊື່ຂອງຕົວອັກສອນຫຍໍ້

REX: Registered Exporter System ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍອກແວ ແລະ ສະວິດເຊີແລນ

SCPP: The Second ASEAN Self-Certification Pilot Project ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງທີ II ຂອງອາຊຽນ

Form A: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (Generalized System of Preferences: GSP) ສຳລັບຜະລິດຕະພັນທົ່ວໄປ

Form D: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ASEAN Trade in Goods Agreement: ATIGA)

Form E: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ສປ ຈີນ (ASEAN - China Free Trade Area: ACFTA)

Form S: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ - ສສ.ຫວຽດນາມ

Form SPT: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ

Form AI: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ-ອິນເດຍ (ASEAN - India Free Trade Area: AIFTA)

Form AK: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ສ.ເກົາຫຼີ (ASEAN - Korea Free Trade Area: AKFTA)

Form AJ: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (The Agreement on Comphrehensive Economic Partnership Among Member State of the Association of Southeast Asian Nation and Japan: AJCEP)

Form AANZ: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ເຂດການຄ້າເສລີອາຊຽນ - ອົດສະຕາລີ - ນິວຊີແລນ (AgreementEstablishing the ASEAN - Australia - New Zealand Free Trade Area: AANZFTA)

Form DFTP: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດພິເສດທາງການຄ້າແບບຝ່າຍດຽວຈາກອິນເດຍ (Duty Free Tariff Preference: DFTP)

Form APTA: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າ ອາຊີ - ປາຊີຟິກ (ASEAN - Pacific Trade Agreement: APTA)

CO-Korea: ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (Certificate of Origin for Preferential Tariff for Least Developed Countries: CO-Korea)

GSP: Generalized System of Preferences ສິດທິພິເສດທາງການຄ້າແບບຝ່າຍດຽວ

FTA: Free Trade Agreement ສັນຍາການຄ້າເສລີ

## ສາລະບານ ໜ້າ


1. ພາບລວມການນຳເຂົ້າ-ສົ່ງອອກສິນຄ້າ ຂອງປີ 2017 ຫາ 2018……………………………………1
2. ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ…………………………………………………2
2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ………………………………………………2
2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ………………………………………3
2.3 ປະເພດແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Certificate of Origin: CO)………………4
2.3.1 ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍອກແວ ແລະ ສະວິດເຊີແລນ (Registered Export System: REX)…………….5
2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ…………………………………7
2.3.3 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສຳລັບຜະລິດຕະພັນທົ່ວໄປ (ຟອມ A)…………. 8
2.3.4 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ຟອມ D)…………………10
2.3.5 ສັນຍາການຄ້າເສລີ ອາຊຽນ - ສປ ຈີນ (ຟອມ E) ……………………………………………12
2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບຸລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ. ຫວຽດນາມ (ຟອມ S)…………………………………………………13
2.3.7 ສິດທິພິເສດການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (ຟອມ SPT) ……………………………………………………………………………………………14
2.3.8 ສັນຍາການຄ້າເສລີ ອາຊຽນ - ອິນເດຍ (ຟອມ AI)………………………………………………14
2.3.9 ສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ (ຟອມ AK)……………………………………………16
2.3.10 ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ອາຊຽນ-ຍີ່ປຸ່ນ (ຟອມ AJ)………………17
2.3.11 ສັນຍາການຄ້າເສລີ ອາຊຽນ-ອົດສະຕາລີ-ນິວຊີແລນ (ຟອມ AANZ)…………………………19
2.3.12 ສັນຍາການຄ້າ ອາຊີ-ປາຊີຟິກ (ຟອມ APTA)…………………………………………………20
2.3.13 ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ.ເກົາຫຼີ (ຟອມ CO-Korea)……………………20
3. ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ…………………………………………………21
3.1 ປະເທດນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ…………………………………………………21
3.2 ລາຍການສິນຄ້ານຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ………………………………………23
4. ເອກະສານຊ້ອນທ້າຍ……………………………………………………………………………24
- ເອກະສານຊ້ອນທ້າຍທີ 01 ຕາຕະລາງລາຍການສິນຄ້າທີ່ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2017-2018……………………………………………………………………………25
- ເອກະສານຊ້ອນທ້າຍທີ 02 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍອກແວ ແລະ ສະວິດ ປະຈຳປີ 2018…………………………………………………………40
- ເອກະສານຊ້ອນທ້າຍທີ 03 ການສົ່ງອອກພາຍໃຕ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ………56
- ເອກະສານຊ້ອນທ້າຍທີ 04 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA ຫຼື ຟອມ D) ປະຈຳປີ 2018…………………………………………………………57
- ເອກະສານຊ້ອນທ້າຍທີ 05 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສປ ຈີນ (ACFTA ຫຼື ຟອມ E) ປະຈຳປີ 2018…………………………………………………………69

- ເອກະສານຊ້ອນທ້າຍທີ 06 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ ຫວຽດນາມ (ຟອມ S) ປະຈຳປີ 2018........73
- ເອກະສານຊ້ອນທ້າຍທີ 07 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສປ ຈີນ ດ້ວຍລະບົບອັດຕາພາສີພິເສດ (ຟອມ SPT) ປະຈຳປີ 2018........76
- ເອກະສານຊ້ອນທ້າຍທີ 08 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (AIFTA) ປະຈຳປີ 2018........77
- ເອກະສານຊ້ອນທ້າຍທີ 09 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ (AKFTA) ປະຈຳປີ 2018........78
- ເອກະສານຊ້ອນທ້າຍທີ 10 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາວ່າດ້ວຍຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ (AJCEP ຫຼື ຟອມ AJ) ປະຈຳປີ 2018........81
- ເອກະສານຊ້ອນທ້າຍທີ 11 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອົດສະຕາລີ - ນີວຊີແລນ (ຟອມ AANZFTA) ປະຈຳປີ 2018........84
- ເອກະສານຊ້ອນທ້າຍທີ 12 ການສົ່ງອອກຂອງ ສປປ ລາວ ພາຍໃຕ້ສັນຍາສິດທິພິເສດທາງການຄ້າແບບຝ່າຍດຽວຈາກ ສ ເກົາຫຼີ (ຟອມ CO-Korea) ປະຈຳປີ 2018........85
- ເອກະສານຊ້ອນທ້າຍທີ 13 ຕາຕະລາງລາຍການສິນຄ້າທີ່ມີການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າປະຈຳປີ 2017-2018........86

## 1. ພາບລວມການນຳເຂົ້າ-ສົ່ງອອກສິນຄ້າ ແຕ່ປີ 2017 ຫາ 2018.

ການນຳເຂົ້າ ແລະ ສົ່ງອອກ ສິນຄ້າຂອງ ສປປ ລາວ ປະກອບດ້ວຍ 02 ຮູບແບບຄື: ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ການນຳເຂົ້າ ແລະ ສົ່ງອອກແບບທີ່ໄດ້ຮັບສິດທິພິເສດທາງການຄ້າ (ການຫຼຸດຜ່ອນ ຫຼື ຍົກເວັ້ນອັດຕາພາສີ). ໃນນັ້ນ, ການນຳເຂົ້າ ແລະ ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ແບ່ງອອກເປັນ 02 ຮູບແບບດ້ວຍກັນຄື: ແບບຝ່າຍດຽວ[1] ແລະ ແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ[2].

ໃນໄລຍະປີ 2017 ຫາ 2018 ເຫັນວ່າ ມູນຄ່າການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປຂອງ ສປປ ລາວ ແມ່ນມີທ່າອ່ຽງການຂຶ້ນລົງຕາມສະພາບເສດຖະກິດຂອງໂລກ. ໃນປີ 2017 ມູນຄ່າການຄ້າເກີນດຸນ 95,491,498.00 ໂດລາສະຫະລັດ. ໃນຄະນະທີ່ປີ 2018 ມູນຄ່າການນຳເຂົ້າທັງໝົດແມ່ນ 5,848,000,000.00 ໂດລາສະຫະລັດ, ແຕ່ມູນຄ່າການສົ່ງອອກມີພຽງ 5,410,100,000.00 ໂດລາສະຫະລັດ ຊຶ່ງສະແດງໃຫ້ເຫັນການຂາດດຸນ 437,900,000.00 ໂດລາສະຫະລັດ. ສາເຫດຂອງການຂາດດຸນ ເຖິງແມ່ນວ່າມູນຄ່າການນຳເຂົ້າ ແລະ ສົ່ງອອກມີທ່າອ່ຽງເພີ່ມຂຶ້ນເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາກໍ່ຕາມ ແຕ່ອັດຕາການນຳເຂົ້າ ເພີ່ມຂຶ້ນໄວກວ່າອັດຕາການສົ່ງອອກ ຍ້ອນສະພາບເສດຖະກິດ ຂອງໂລກມີການປ່ຽນແປງ, ບັນຫາເກີດມີສົງຄາມການຄ້າຂອງບັນດາປະເທດຕ່າງໆທີ່ພັດທະນາ ໂດຍສະເພາະປະເທດສະຫະລັດອາເມລິກາ ກັບ ສປ ຈີນ ແລະ ການປ່ຽນແປງຂອງລາຄານ້ຳມັນເຊື້ອໄຟໃນຕະຫຼາດໂລກ. ນອກຈາກນັ້ນສະພາບການພາຍໃນປະເທດກໍ່ເກີດມີບັນຫາໄພນ້ຳຖ້ວມຢູ່ຫຼາຍແຂວງ ສົ່ງຜົນກະທົບຕໍ່ຜູ້ຜະລິດພາຍໃນ ເຊິ່ງສາເຫດດັ່ງກ່າວກໍ່ໄດ້ສົ່ງຜົນກະທົບໃນທາງກົງ ແລະ ທາງອ້ອມ ຕໍ່ກັບການການສົ່ງອອກສິນຄ້າຂອງ ສປປ ລາວ ເປັນຕົ້ນແມ່ນການຫຼຸດລົງຂອງລາຄາແຮ່ທອງ, ຄຳປະສົມ, ຄຳແທ່ງ; ສິນຄ້າອຸດສະຫະກຳ (ໂຄງຮ່າງ ແລະ ຊິ້ນສ່ວນກ້ອງບັນທຶກພາບ, ເຄື່ອງນຸ່ງຫົ່ມ, ນ້ຳຕານ; ຢາສູບ ແລະ ຜະລິດຕະພັນຢາສູບ; ສິນຄ້າກະສິກຳ (ໝາກກ້ວຍ, ກາເຟບໍ່ທັນໄດ້ປຸງແຕ່ງ).

ໃນການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນໄລຍະປີ 2017 ຫາ 2018 ກວມເອົາອັດຕາສ່ວນຂອງການສົ່ງອອກທັງໝົດຫຼາຍພໍສົມຄວນຄື: 28.5% ແລະ 24.30% ຕາມລຳດັບ. ສ່ວນເບື້ອງການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າໃນປີ 2017 ຫາ 2018 ເຫັນວ່າ ກວມເອົາພຽງແຕ່ 11.20% ແລະ 10.80% ຂອງມູນຄ່າການນຳເຂົ້າທັງໝົດ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 01)

**ຕາຕະລາງ 01:** ການນຳເຂົ້າ ແລະ ສົ່ງອອກແບບທົ່ວໄປ ແລະ ພາຍໃຕ້ສິດທິພິເສດທາງການຄ້າ ປີ 2017-2018

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍການ | 2018 | 2017 |
|---|---|---|---|
| I | **ການສົ່ງອອກ** | | |
| 1 | ການສົ່ງອອກແບບທົ່ວໄປ (ທັງໝົດ) | 5,410,100,000.00 | 4,887,883,755.00 |
| 2 | ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ | 1,312,291,384.70 | 1,390,664,591.66 |
| 3 | ອັດຕາສ່ວນ | 24.30% | 28.50% |
| II | **ການນຳເຂົ້າ** | | |
| 1 | ການນຳເຂົ້າແບບທົ່ວໄປ (ທັງໝົດ) | 5,848,000,000.00 | 4,792,392,257.00 |
| 2 | ການນຳເຂົ້າພາຍໃຕ້ສິດທິພິເສດທາງການຄ້າ | 631,832,419.00 | 535,722,417.00 |
| 3 | ອັດຕາສ່ວນ | 10.80% | 11.20% |

[1] ສິດທິພິເສດແບບຝ່າຍດຽວ (ລະບົບສິດທິພິເສດທົ່ວໄປ ຫຼື Generalized System of Preferences: GSP)

[2] ສິດທິພິເສດແບບຕອບແທນກັນ ຫຼື ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ (ເຂດການຄ້າເສລີ ຫຼື Free Trade Area FTA)

## 2 ການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

## 2.1 ປະເທດສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2018 ສປປ ລາວ ມີການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໄປ 37 ປະເທດ. ໃນນັ້ນ, ປະເທດທີ່ສົ່ງອອກໄປຫຼາຍແມ່ນ ໄທ, ສສ ຫວຽດນາມ ແລະ ສປ ຈີນ; ມີມູນຄ່າການສົ່ງອອກສູງເຖິງ 425,866,333.80 ໂດລາສະຫະລັດ, 332,857,121.55 ໂດລາສະຫະລັດ ແລະ 250,952,145.90 ໂດລາສະຫະລັດ ຕາມລຳດັບ. ສ່ວນປະເທດທີ່ມີການສົ່ງອອກໄປໜ້ອຍທີ່ສຸດໃນປີນີ້ແມ່ນ ອິດສະຕາລີ, ອູເຄຣນ, ແລະ ສິງກະໂປ; ຊຶ່ງມີມູນຄ່າພຽງ 10,648.00 ໂດລາສະຫະລັດ, 14,456.00 ໂດລາສະຫະລັດ, ແລະ 39,000.00 ໂດລາສະຫະລັດ ຕາມລຳດັບ. ນອກຈາກນັ້ນ, ຍັງສັງເກດເຫັນວ່າ ໃນປີ 2018 ເຫັນວ່າ ມີຫຼາຍປະເທດທີ່ມີການສົ່ງອອກໃໝ່ ເຊັ່ນວ່າ: ໂຄເອເຊຍ, ເຊັກ, ບູນກາລີ ແລະ ອູເກຣນ. ໃນຂະນະດຽວກັນ, ບັນດາປະເທດທີ່ມີການສົ່ງອອກໃນປີ 2017 ແຕ່ປີ 2018 ແມ່ນບໍ່ມີການສົ່ອອກ ໄດ້ແກ່: ເອັສໂຕນີ, ມຽນມາ, ໂກຣເອເຊຍ, ມຽນມາ, ໂກຣເອເຊຍ, ລັດເຊຍ, ສະໂລເວເນຍ ແລະ ນໍອກແວ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 02)

**ຕາຕະລາງ 02 :** ປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າໃນປີ 2017 ແລະ 2018

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລາຍຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | **2018** | **2017** |
| 1 | ໄທ | 425,866,333.80 | 569,967,866.06 |
| 2 | ສສ.ຫວຽດນາມ | 332,857,121.55 | 270,548,296.38 |
| 3 | ສປ ຈີນ | 250,952,145.90 | 93,137,188.01 |
| 4 | ເຢຍລະມັນ | 78,949,205.82 | 95,499,439.97 |
| 5 | ຍີ່ປຸ່ນ | 78,779,898.23 | 108,207,307.52 |
| 6 | ສະວີເດນ | 23,285,441.82 | 60,668,343.98 |
| 7 | ອັງກິດ | 21,612,173.68 | 43,605,625.85 |
| 8 | ອີຕາລີ | 14,185,987.10 | 18,680,308.62 |
| 9 | ແບນຊິກ | 13,157,813.80 | 11,849,208.01 |
| 10 | ເດນມາກ | 11,860,600.69 | 39,767.50 |
| 11 | ຟີລິບປິນ | 8,912,778.41 | 4,122,599.20 |
| 12 | ຝຣັ່ງ | 7,920,867.40 | 9,959,627.46 |
| 13 | ມາເລເຊຍ | 7,149,644.42 | 5,135,102.61 |
| 14 | ໂຮນລັງ | 6,544,578.97 | 7,824,970.62 |
| 15 | ສ.ເກົາຫຼີ | 4,980,229.00 | 2,246,566.30 |
| 16 | ອິນເດຍ | 4,870,836.55 | 12,642,927.23 |
| 17 | ຕວກກີ | 4,523,090.00 | 2,111,282.64 |

| | | | |
|---|---|---|---|
| 18 | ປ໋ອກຕຸຍການ | 4,091,900.89 | 26,992,568.81 |
| 19 | ກຳປູເຈຍ | 4,086,415.94 | 17,545,922.56 |
| 20 | ແອັສປາຍ | 2,616,795.86 | 2,165,695.84 |
| 21 | ອິນໂດເນເຊຍ | 947,900.45 | 1,180,643.22 |
| 22 | ອາເມລິກາ | 861,609.00 | 1,980,316.93 |
| 23 | ອົດສະຕາລີ | 809,291.76 | 1,311,327.22 |
| 24 | ແອັກລັງ | 462,615.60 | 2,292,711.08 |
| 25 | ໂປໂລຍ | 435,031.60 | 16,924,963.93 |
| 26 | ໂອຕຣິສ | 356,138.58 | 2,270,830.26 |
| 27 | ໂຄເອເຊຍ | 250,000.00 | - |
| 28 | ເຊັກ | 230,344.60 | - |
| 29 | ນິວຊີແລນ | 183,223.80 | 35,352.30 |
| 30 | ສິງກະໂປ | 157,447.76 | 70,752.40 |
| 31 | ບູນກາລີ | 99,000.00 | - |
| 32 | ການາດາ | 89,307.03 | 173,780.78 |
| 33 | ສະວິດເຊີແລນ | 82,951.71 | 44,742.94 |
| 34 | ເກຼັກ | 58,559.00 | 560,382.00 |
| 35 | ສິງກະໂປ | 39,000.00 | 70,752.40 |
| 36 | ອູເກຣນ | 14,456.00 | - |
| 37 | ອົດສະຕາລີ | 10,648.00 | 1,227,613.22 |
| 38 | ເອັສໂຕນີ | - | 237,600.00 |
| 39 | ມຽນມາ | - | 164,758.90 |
| 40 | ໂກຣເອເຊຍ | - | 162,600.00 |
| 41 | ລັດເຊຍ | - | 130,775.00 |
| 42 | ສະໂລເວເນຍ | - | 116,224.32 |
| 43 | ນ໋ອກແວ | - | 56,215.20 |
| | **ລວມ** | **1,312,291,384.70** | **1,390,664,591.66** |

## 2.2 ລາຍການສິນຄ້າສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ

ໃນປີ 2018 ການສົ່ງອອກສິນຄ້າຈາກ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າປະກອບມີລາຍການສິນຄ້າຈຳນວນ 11 ກຸ່ມຄື: ສັດ, ຜະລິດຕະພັນແຮ່ທາດ, ພືດກະສິກຳ, ຫັດຖະກຳ, ອຸດສາຫະກຳ, ເຄື່ອງປ່າຂອງດົງ, ແກ້ວປະເສີດອື່ນໆ, ແຮ່ທາດ, ໂລຫະ ແລະ ເສດຕ່າງໆ, ໄຟຟ້າ, ແລະ ໄມ້ ແລະ ຜະລິດຕະພັນໄມ້. ຊຶ່ງມີລາຍການສິນຄ້າສົ່ງອອກທັງໝົດ 236 ລາຍການ, ລວມມູນຄ່າການສົ່ງອອກທັງໝົດ 1,312,291,384.70 ໂດລາສະຫະລັດ. ໃນນັ້ນ, ກຸ່ມສິນຄ້າທີ່ສົ່ງອອກຫຼາຍກວ່າໝູ່ 03 ອັນດັບຕົ້ນແມ່ນ ກຸ່ມສິນຄ້າອຸດສາຫະກຳ ມີມູນຄ່າການສົ່ງອອກຫຼາຍທີ່ສຸດສູງເຖິງ 637,567,208.23 ໂດລາສະຫະລັດ, ຮອງລົງມາແມ່ນ ກຸ່ມສິນຄ້າພືດກະສິກຳ ມີມູນຄ່າ 406,946,611.55 ໂດລາ

ສະຫະລັດ ແລະ ກຸ່ມສິນຄ້າຜະລິດຕະພັນແຮ່ທາດ ມີມູນຄ່າ 89,502,581.06 ໂດລາສະຫະລັດ. ນອກຈາກນັ້ນ, ຍັງສັງເກດເຫັນວ່າ ກຸ່ມສິນຄ້າທີ່ແນວໂນ້ມຫຼຸດລົງຈາກປີທີ່ຜ່ານມາແມ່ນ ກຸ່ມສິນຄ້າປະເພດ ໂລຫະ ແລະ ເສດຕ່າງໆ ມີມູນຄ່າການສົ່ງອອກພຽງ 50.40 ໂດລາສະຫະລັດ, ແກ້ວປະເສີດ ມີມູນຄ່າ 626,067.96 ໂດລາສະຫະລັດ ແລະ ເຄື່ອງປ່າຂອງດົງ ມີມູນຄ່າ 4,788,933.07 ໂດລາສະຫະລັດ.

ເມື່ອສົມທຽບກຸ່ມສິນຄ້າສົ່ງອອກປະຈໍາປີ 2018 ກັບ 2017 ເຫັນວ່າ ກຸ່ມສິນຄ້າທີ່ເພີ່ມຂຶ້ນແມ່ນ ກຸ່ມສິນຄ້າຫັດຖະກໍາ, ອຸດສາຫະກໍາ, ເຄື່ອງປ່າຂອງດົງ, ແກ້ວປະເສີດອື່ນໆ, ແຮ່ທາດ ແລະ ໄຟຟ້າສົ່ງອອກ. ສໍາລັບກຸ່ມສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງປະກອບມີ: ກຸ່ມສິນຄ້າສັດ, ຜະລິດຕະພັນແຮ່ທາດ, ພືດກະສິກໍາ, ໂລຫະ ແລະ ເສດຕ່າງໆ ແລະ ໄມ້ ແລະ ຜະລິດຕະພັນໄມ້. (ລາຍລະອຽດສາມາດເບິ່ງຕາມເອກະສານຊ້ອນທ້າຍທີ 01)

## 2.3 ປະເພດແບບຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ (Certificate of Origin: CO)

ໃນປີ 2018 ສປປ ລາວ ໄດ້ສົ່ງອອກສິນຄ້າພາຍໃຕ້ສິດທິພິເສດທາງການຄ້າ ໂດຍນໍາໃຊ້ທັງໝົດ 12 ແບບຟອມໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ແລະ ຢັ້ງຢືນດ້ວຍຕົນເອງຂອງ 02 ໂຄງການຄື: ອາຊຽນ ແລະ ສະຫະພາບເອີຣົບ. ໃນນັ້ນ, ແບບຟອມທີ່ໄດ້ອອກໄປທັງໝົດຈໍານວນ 22,979 ຊຸດ, ທີ່ສົ່ງໄປທັງໝົດ 37 ປະເທດ. ມູນຄ່າການສົ່ງອອກທັງໝົດໃນປີ 2018 ແມ່ນ 1,312,291,384.70 ໂດລາສະຫະລັດ ເມື່ອທຽບປີ 2017 ທີ່ມີມູນຄ່າການສົ່ງອອກ 1,390,664,591.66 ໂດລາສະຫະລັດ ເຫັນວ່າ ຫຼຸດລົງ -6%.

ໃນໄລຍະ 01 ປີ ທີ່ຜ່ານມາເຫັນວ່າ ແບບຟອມ CO ທີ່ມີການນໍາໃຊ້ຫຼາຍກວ່າໝູ່ແມ່ນ ຟອມ D, E, ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍ່ອກແວ ແລະ ສະວິດເຊີແລນ ແລະ ຟອມ S ຕາມລໍາດັບ. ໂດຍມີມູນຄ່າການສົ່ງອອກໃນປີ 2018 ມີຄື: :① ຟອມ D ມີມູນຄ່າ 552,517,342.37 ໂດລາສະຫະລັດ, ② ຟອມ E ມີມູນຄ່າ 236,076,305.90 ໂດລາສະຫະລັດ, ③ ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍ່ອກແວ ແລະ ສະວິດ ມີມູນຄ່າ 186,154,750.71 ໂດລາສະຫະລັດ,[3] ແລະ ④ ຟອມ S ມີມູນຄ່າ 161,227,183.21 ໂດລາສະຫະລັດ. ນອກຈາກນັ້ນ, ສັງເກດເຫັນວ່າ ແບບຟອມທີ່ມີແນວໂນ້ມເພີ່ມຂຶ້ນຫຼາຍໃນປີນີ້ມີ ຟອມ APTA, AJ, E, AK ແລະ S; ເປີເຊັນເພີ່ມຂຶ້ນຄື: 400%, 215%, 215%, 53% ແລະ 7%. ພ້ອມດຽວກັນກໍຍັງມີແບບຟອມທີ່ມີການນໍາໃຊ້ຫຼຸດລົງໃນເປັນຕົ້ນແມ່ນ: ຟອມ A (ສໍາລັບຜະລິດຕະພັນທົ່ວໄປ), CO-Korea, AI, D, AANZ, ແລະ SPT; ມີເປີເຊັນຫຼຸດລົງຄື: -75%, -66, -28%, -21%, -21%, ແລະ -19% ຕາມລໍາດັບ.

ສໍາລັບແບບຟອມທີ່ມີການນໍາໃຊ້ທີ່ເພີ່ມຂຶ້ນຫຼາຍແມ່ນ ຟອມ APTA, AJ ແລະ E; ຊຶ່ງຟອມມີເປີເຊັນເພີ່ມຂຶ້ນ 400%, 217% ແລະ 215% ຕາມລໍາດັບ, ຖືວ່າເປັນອັດຕາທີ່ເພີ່ມຂຶ້ນສູງສຸດໃນບັນດາແບບຟອມທັງໝົດຂອງປີນີ້. ແຕ່ໃນຂະນະດຽວກັນກໍ່ມີແບບຟອມທີ່ມີການນໍາໃຊ້ໜ້ອຍລົງຄື: ຟອມ A (ສໍາລັບຜະລິດຕະພັນທົ່ວໄປ) ແລະ CO-Korea, ຊຶ່ງຫຼຸດລົງເຖິງ -75% ແລະ -66% ຕາມລໍາດັບ.

ນອກຈາກນັ້ນ, ເມື່ອມີການສົມທຽບລະຫວ່າງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າແບບຝ່າຍດຽວ ແລະ ແບບຕອບແທນກັນ ເຫັນວ່າ ການນໍາໃຊ້ສິດທິພິເສດແບບຝ່າຍດຽວມີມູນຄ່າພຽງ 278,609,546.12 ໂດລາສະຫະລັດ, ໃນຂະນະທີ່ການສົ່ງອອກແບບຕອບແທນກັນ ມີມູນຄ່າສູງເຖິງ 1,033,681,838.58 ໂດລາສະຫະລັດ. ຊຶ່ງ

[3] ສໍາລັບຂໍ້ມູນການສົ່ງອອກດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍ່ອກແວ ແລະ ສະວິດເຊີແລນ ໃນປີ 2017 ແມ່ນໄດ້ລວມເຂົ້າກັບສະຖິຕິການສົ່ງອອກເຄື່ອງນຸ່ງຫົ່ມທີ່ອອກແບບເຈັຍສໍ (ຟອມ AT 2017). ເນື່ອງຈາກວ່າໃນປີ 2017 ໂຄງການດັ່ງກ່າວຍັງຢູ່ໃນຂັ້ນທົດລອງ ຈຶ່ງເຮັດໃຫ້ມີບາງບໍລິສັດທີ່ຍັງສືບຕໍ່ອອກຟອມ A ນໍາເຈົ້າໜ້າທີ່ອອກຟອມຂອງ ສປປ ລາວ ແລະ ບາງບໍລິສັດກໍ່ອອກດ້ວຍຕົນເອງ. ຈົນມາເຖິງປີ 2018 ແມ່ນການນໍາໃຊ້ການອອກດ້ວຍຕົນເອງຢ່າງເຕັມຮູບແບບຂອງໂຄງການດັ່ງກ່າວ, ຊຶ່ງທຸກບໍລິສັດທີ່ຕ້ອງການສົ່ງອອກໄປຍັງບັນດາປະເທດໃນສະຫະພາບເອີຣົບ, ນໍ່ອກແວ ແລະ ສະວິດເຊີແລນ ແມ່ນຕ້ອງໄດ້ນໍາໃຊ້ລະບົບຢັ້ງຢືນດ້ວຍຕົນເອງ.

ການສົ່ງອອກແບບຕອບແທນກັນ ກວມເອົາອັດຕາສ່ວນຫຼາຍຂອງການສົ່ງອອກພາຍໃຕ້ສິດທິພິເສດທາງການຄ້າ ສູງເຖິງ 78.77%.

**ຕາຕະລາງ 03:** ແບບຟອມຢັ້ງຢືນແຫຼ່ງກຳເນີດສິນຄ້າປີ 2017 ແລະ 2018

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ຊື່ຊະນິດຟອມ | ຈຳນວນຟອມ (2018) | ຈຳນວນຟອມ (2017) | ມູນຄ່າສົ່ງອອກ ປີ 2018 | ມູນຄ່າສົ່ງອອກ ປີ 2017 | % |
|---|---|---|---|---|---|
| REX (Registered Exporter System) | 5,622.00 | - | 186,154,750.71 | - | - |
| AT | - | 7,302.00 | - | 240,044,139.75 | |
| ASEAN Self Certification | 548.00 | - | 37,339,612.99 | - | - |
| A Normal | 764.00 | 3,378.00 | 38,927,371.02 | 154,808,254.16 | (75) |
| D | 11,485.00 | 16,699.00 | 552,517,342.37 | 701,445,653.65 | (21) |
| E | 1,252.00 | 509.00 | 236,076,305.90 | 74,867,633.01 | 215 |
| S | 2,379.00 | 1,794.00 | 161,227,183.21 | 150,691,827.51 | 7 |
| AI | 58.00 | 25.00 | 16,365,429.07 | 22,709,709.75 | (28) |
| AK | 304.00 | 118.00 | 6,551,619.44 | 4,293,263.91 | 53 |
| AJ | 295.00 | 192.00 | 59,889,596.04 | 18,866,332.80 | 217 |
| AANZ | 63.00 | 299.00 | 992,515.56 | 1,262,965.52 | (21) |
| APTA | 11.00 | 43.00 | 61,847.00 | 12,380.00 | 400 |
| CO-Korea | 180.00 | 1.00 | 1,148,701.40 | 3,407,726.60 | (66) |
| DFTP | 9.00 | - | 163,270.00 | - | - |
| SPT | 9.00 | 204.00 | 14,875,840.00 | 18,254,705.00 | (19) |
| **ລວມທັງໝົດ** | **22,979.00** | **30,564.00** | **1,312,291,384.70** | **1,390,664,591.66** | (6) |

### 2.3.1 ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນ໋ອກແວ ແລະ ສະວິດເຊີແລນ (Registered Exporter System: REX)

ສປປ ລາວ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການທົດລອງນຳໃຊ້ລະບົບ REX ແຕ່ວັນທີ 01 ມັງກອນ 2017 ເປັນຕົ້ນມາ ໄດ້ເລີ່ມໂຄງການທົດລອງນຳໃຊ້ລະບົບການຢັ້ງຢືນແຫຼ່ງກຳເນີດສິນຄາດ້ວຍຕົນເອງ ໂດຍນຳໃຊ້ Statement on Origin ປ່ຽນແທນ ຟອມ A ທີ່ເຈົ້າໜ້າທີ່ພາກລັດເປັນຜູ້ອອກໃຫ້ໃນເມື່ອກ່ອນ ເພື່ອຂໍຫຼຸດຜ່ອນອັດຕາພາສີນຳເຂົ້າສະຫະພາບເອີຣົບ, ນ໋ອກແວ ແລະ ສະວິດເຊີແລນ. ຊຶ່ງລະບົບດັ່ງກ່າວພຽງແຕ່ຜູ້ສົ່ງອອກມາຂໍລົງທະບຽນນຳ ກົມການນຳເຂົ້າ ແລະ ສົ່ງອອກ (ກົມ ຂອ), ຫຼັງຈາກນັ້ນ ກົມ ຂອ ກໍ່ຈະລົງທະບຽນໃຫ້ຜູ້ສົ່ງອອກໃນນາມປະເທດ. ສຳລັບການນຳໃຊ້ລະບົບ REX ໃນປີ 2017 ແມ່ນຍັງເປັນການທົດລອງນຳໃຊ້ ໂດຍອະນຸຍາດໃຫ້ຜູ້ປະກອບເລືອກນຳໃຊ້ທີ່ຈະອອກດ້ວຍຕົນເອງ ຫຼື ອອກຟອມ A ຄວບຄູ່ກັນໄປ. ພໍມາຮອດວັນທີ 01 ມັງກອນ 2018 ແມ່ນເປັນການນຳໃຊ້ລະບົບ REX ຢ່າງ

ເຕັມຮູບແບບ, ຊຶ່ງທຸກບໍລິສັດທີ່ຕ້ອງການນຳໃຊ້ສິດທິພິເສດທາງການຄ້າ ໃນການສົ່ງສິນຄ້າໄປຍັງບັນດາປະເທດໃນສະຫະພາບເອີຣົບ, ນອກແວ ແລະ ສະວິດ ຕ້ອງໄດ້ອອກຜ່ານລະບົບ REX ຊ່ອງທາງດຽວເທົ່ານັ້ນ.

ໃນປີ 2018 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆ ໂດຍນຳໃຊ້ລະບົບ REX ເຫັນວ່າ ມີມູນຄ່າສົ່ງອອກທັງໝົດ 186,154,750.71 ໂດລາສະຫະລັດ. ໃນນັ້ນ, ສິນຄ້າທີ່ສົ່ງອອກໄປຫຼາຍກວ່າໝູ່ແມ່ນ ຊຸດສູດສຳລັບຜູ້ຊາຍ (ລະຫັດພາສີ 6203) ມີມູນຄ່າສົ່ງອອກສູງເຖິງ 62,646,885.97 ໂດລາສະຫະລັດ, ຮອງລົງມາແມ່ນ ເສື້ອກັນໜາວ (ລະຫັດພາສີ 6110) ມີມູນຄ່າສົ່ງອອກ 12,003,794.63 ໂດລາສະຫະລັດ ແລະ ກ້ອງຈຸລະທັດ (ລະຫັດພາສີ 9011) ມີມູນຄ່າສົ່ງອອກ 10,904,318.26 ໂດລາສະຫະລັດ.

ສຳລັບປະເທດທີ່ມີການສົ່ງອອກໂດຍນຳໃຊ້ລະບົບ REX ໃນປີ 2018 ທີ່ມີມູນຄ່າສົ່ງອອກຫຼາຍກວ່າໝູ່ 03 ອັນດັບແມ່ນ ເຢຍລະມັນ, ສະວີເດັນ ແລະ ອັງກິດ. ຊຶ່ງມີມູນຄ່າການສົ່ງອອກ 78,949,205.82 ໂດລາສະຫະລັດ, 23,285,441.82 ໂດລາສະຫະລັດ ແລະ 21,612,173.68 ໂດລາສະຫະລັດ ຕາມລຳດັບ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 04, 05 ແລະ ເອກະສານຊ້ອນທ້າຍທີ 02)

**ຕາຕະລາງ 04:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນ໋ອກແວ ແລະ ສະວິດ ປະຈຳປີ 2018

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ |
|---|---|---|---|
| | | | **2018** |
| 1 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນ້ຳ). | 62,646,885.97 |
| 2 | 6110 | ເສື້ອກັນໜາວແບບເຈີຣ໌ຊີ, ເສື້ອກັນໜາວແບບສຸບຫົວ, ເສື້ອຊະນິດຄາຣ໌ດິແກນ, ເສື້ອກັກ ແລະ ເຄື່ອງຄ້າຍຄືກັນ, ທີ່ຖັກ ຫຼື ແບບໂຄຣເຊັດທ໌. | 12,003,794.63 |
| 3 | 9011 | ກ້ອງຈຸລະທັດແບບໃຊ້ເລນຊ໌ປະກອບ, ລວມທັງກ້ອງຈຸລະທັດສຳລັບໃຊ້ໃນການຖ່າຍຮູບ, ຖ່າຍຮູບເງົາ ຫຼື ການສາຍພາບຂອງຈຸລະວັດຖຸ. | 10,904,318.26 |
| 4 | 6109 | ເສື້ອຍືດຄໍມົນ, ເສື້ອຊັ້ນໃນແບບຊິງເກລດທ໌ ແລະ ເສື້ອຊັ້ນໃນແບບອື່ນໆ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 10,261,345.04 |
| 5 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 10,844,100.03 |
| 6 | 6107 | ໂສ້ງຊ້ອນໃນສຳລັບຜູ້ຊາຍ ຫຼື ເດັກຊາຍ, ໂສ້ງຊ້ອນໃນຂາສັ້ນ, ເສື້ອນຸ່ງນອນ, ຊຸດນຸ່ງນອນ, ເສື້ອຄຸມອາບນ້ຳ, ເສື້ອຄຸມແຕ່ງຕົວ ແລະ ເຄື່ອງຄ້າຍຄຽງ, ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 8,574,182.63 |
| 7 | 6211 | ຊຸດວອມກິລາ, ຊຸດສຳລັບຫຼິ້ນສະກີ ແລະ ຊຸດລອຍນ້ຳ; ເຄື່ອງນຸ່ງຫົ່ມອື່ນໆ. | 11,299,953.65 |
| 8 | 6201 | ເສື້ອໂອເວີຣ໌ໂຄດ ສຳລັບຜູ້ຊາຍ ຫຼື ເດັກຊາຍ, ຜ້າຄຸມລົດ, ຜ້າຄຸມໄຫຼ່, ເສື້ອຄຸມແບບຫຼົມໆ, ເສື້ອກັນໜາວທີ່ມີໝວກຕິດຢູ່ນຳ (ລວມທັງເສື້ອແຈັກເກັດສຳລັບຫຼິ້ນສະກີ), ເສື້ອກັນລົມ, ເສື້ອແຈັກເກັດກັນລົມ ແລະ ສິ່ງທີ່ຄ້າຍຄຽງກັນ, ນອກຈາກເຄື່ອງຕາມລະຫັດເຄົ້າ 62.03 | 4,948,707.90 |

| | | | |
|---|---|---|---|
| 9 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງ ທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນ້ຳ). | 7,952,938.69 |
| 10 | 1006 | ເຂົ້າ. | 5,182,063.21 |
| 11 | ອື່ນໆ | | 41,536,460.71 |
| **ລວມ:** | | | **186,154,750.71** |

**ຕາຕະລາງ 05:** ປະເທດສົ່ງອອກຫຼັກພາຍໃຕ້ໂຄງການທົດລອງຂອງສະຫະພາບເອີຣົບ, ນໍອກແວ ແລະ ສະວິດ ປະຈຳປີ 2018

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ |
|---|---|---|
| | | **2018** |
| 1 | ເຢຍລະມັນ | 78,949,205.82 |
| 2 | ສະວີເດນ | 23,285,441.82 |
| 3 | ອັງກິດ | 21,612,173.68 |
| 4 | ອີຕາລີ | 14,185,987.10 |
| 5 | ແບນຊິກ | 13,157,813.80 |
| 6 | ເດນມາກ | 11,860,600.69 |
| 7 | ຝຣັ່ງ | 7,920,867.40 |
| 8 | ໂຮນລັງ | 6,544,578.97 |
| 9 | ປ໋ອກຕຸຍການ | 4,091,900.89 |
| 10 | ແອັສປາຍ | 2,616,795.86 |
| ອື່ນໆ | | 1,856,369.69 |
| **ລວມ** | | **186,083,753.71** |

### 2.3.2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ໂຄງການທົດລອງອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງອາຊຽນ (The Second ASEAN Self-Certification Pilot Project: SCPP2). ຮູບແບບການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ແມ່ນຜູ້ໄດ້ຮັບສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໂດຍການອອກໃບ Invoice Declaration ແທນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ D. ໂຄງການ SCPP2 ມີຈຸດປະສົງເພື່ອເປັນການອຳນວຍຄວາມສະດວກໃນການນຳເຂົ້າ ແລະ ສົ່ງອອກສິນຄ້າໃນບັນດາປະເທດອາຊຽນດ້ວຍກັນ, ເພື່ອສົ່ງເສີມການເຄື່ອນຍ້າຍສິນຄ້າຢູ່ພາກພື້ນ ແລະ ຫຼຸດຜ່ອນຕົ້ນທຶນ ແລະ ເວລາ. ໂຄງການດັ່ງກ່າວໄດ້ເຊັນ MOU ວັນທີ 29/08/2012 ແລະ ມີຜົນບັງຄັບໃຊ້ ວັນທີ 10/05/2013, ມີປະເທດເຂົ້າຮ່ວມທັງໝົດ 05 ປະເທດຄື: ລາວ, ອິນໂດເນເຊຍ, ຟີລິບປິນ (01/01/2014), ໄທ (01/05/2015) ແລະ ສສ.ຫວຽດນາມ (19/12/2014). ໃນປີ 2018 ບັນດາປະເທດພາຄີໄດ້

ມີຈຳນວນບໍລິສັດທີ່ເຂົ້າຮ່ວມໂຄງການນີ້ທັງໝົດ 150 ບໍລິສັດ, ໃນນັ້ນ ອິນໂດເນເຊຍ 13 ບໍລິສັດ, ລາວ 10 ບໍລິສັດ, ຟິລິບປິນ 02 ບໍລິສັດ, ໄທ 119 ບໍລິສັດ ແລະ ຫວຽດນາມ 06 ບໍລິສັດ.

ໃນປີ 2018 ມີມູນຄ່າສົ່ງອອກທັງໝົດ 37,339,612.99 ໂດລາສະຫະລັດ, ຊຶ່ງສິນຄ້າທີ່ສົ່ງອອກຫຼາຍເປັນອັນດັບໜຶ່ງແມ່ນ ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານ ອື່ນໆ (ລະຫັດພາສີ 2202) ມີມູນຄ່າ 17,885,188.30 ໂດລາສະຫະລັດ, ຮອງລົງມາແມ່ນ ມັນຕົ້ນ (ລະຫັດພາສີ 0714) ມີມູນຄ່າ 12,551,520.00 ໂດລາສະຫະລັດ ແລະ ຢາງທຳມະຊາດ (ລະຫັດພາສີ 4001) ມີມູນຄ່າການສົ່ງອອກ 5,196,500.00 ໂດລາສະຫະລັດ. ສຳລັບປະເທດທີ່ສົ່ງອອກແມ່ນມີພຽງ 02 ປະເທດຄື: ໄທ ແລະ ສສ.ຫວຽດນາມ; ມີມູນຄ່າສົ່ງອອກ 32,143,112.99 ໂດລາສະຫະລັດ ແລະ 5,196,500.00 ໂດລາສະຫະລັດ ຕາມລຳດັບ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 06, 07 ແລະ ເອກະສານຊ້ອນທ້າຍທີ 03)

**ຕາຕະລາງ 06:** ລາຍການສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ |
|---|---|---|---|
| | | | **2018** |
| 1 | 2202 | ນ້ຳ, ລວມທັງນ້ຳແຮ່ທາດ ແລະ ນ້ຳອັດລົມທີ່ຕື່ມນ້ຳຕານ ຫຼື ສານຫວານ ອື່ນໆ ຫຼື ແຕ່ງກິ່ນ ແລະ ເຄື່ອງດື່ມອື່ນໆ ບໍ່ມີທາດເຫຼົ້າ, ແຕ່ບໍ່ລວມເອົານ້ຳໝາກໄມ້ ຫຼື ນ້ຳຜົກຜັກຂອງລະຫັດເຄົ້າ 20.09. | 17,885,188.30 |
| 2 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກ່ນສາຄູ. | 12,551,520.00 |
| 3 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຮ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປ | 5,196,500.00 |
| 4 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 929,303.59 |
| 5 | 6402 | ເກີບອື່ນໆ ທີ່ມີພື້ນນອກ ແລະ ຂ້າງເທິງຂອງເກີບເຮັດດ້ວຍຢາງ ຫຼື ພລາສຕິກ. | 471,934.60 |
| 6 | 1005 | ເຂົ້າສາລີ (ເຂົ້າໂພດ). | 265,200.00 |
| 7 | 6405 | ເກີບອື່ນໆ. | 37,383.50 |
| 8 | 2302 | ຮຳ, ເສດຫັກ ຫຼື ເສດອື່ນໆ ຂອງທັນຍະພືດ ຫຼື ພືດຕະກຸນຖົ່ວ, ຈະອັດເປັນເມັດແບບເພລເລດທ໌ ຫຼື ບໍ່ກໍ່ຕາມ, ທີ່ໄດ້ຈາກການຮ່ອນ, ການສີ ຫຼື ກຳມະວິທີອື່ນໆ. | 2,583.00 |
| | | **ລວມ** | **37,339,612.99** |

**ຕາຕະລາງ 07:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ພາຍໃຕ້ການຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງທີ II ຂອງອາຊຽນ

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ |
|---|---|---|

| | | 2018 |
|---|---|---|
| 1 | ໄທ | 32,143,112.99 |
| 2 | ສສ.ຫວຽດນາມ | 5,196,500.00 |
| **ລວມ** | | **37,339,612.99** |

### 2.3.3 ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນທົ່ວໄປ (ຟອມ A)

ໃນປີ 2018 ສປປ ລາວ ມີການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດແກ່ ສປປ ລາວ ແບບຝ່າຍດຽວ (ຟອມ A) ຄື: ການາດາ, ອິດສະຕາລີ, ນິວຊີແລນ, ຕວກກີ, ນອກແວ, ລັດເຊຍ, ເບລາຣຸສ, ກາຊັກສະຖານ, ຍີ່ປຸ່ນ, ອາເມລິກາ[4]. ໃນປີ 2018 ມູນຄ່າການສົ່ງອອກທັງໝົດໃນຂອບສັນຍານີ້ມີພຽງ 38,927,371.02 ໂດລາສະຫະລັດ ເມື່ອທຽບໃສ່ປີ 2017 ເຫັນວ່າ ມູນຄ່າການສົ່ງອອກຫຼຸດລົງຫຼາຍ ສູງເຖິງ 75%. ສາເຫດທີ່ພາໃຫ້ມູນຄ່າການສົ່ງອອກໃນຂອບສັນຍານີ້ຫຼຸດລົງຫຼາຍ ເນື່ອງຈາກວ່າ ມູນຄ່າການສົ່ງອອກໃນປີ 2017 ແມ່ນ ໄດ້ລວມເອົາສິນຄ້າຕ່າງໆທີ່ສົ່ງອອກໄປຍັງສະຫະເອີຣົບ, ນໍອກແວ ແລະ ສະວິດ ນອກເໜືອຈາກຜະລິດຕະພັນເຄື່ອງນຸ່ງຫົ່ມ. ແຕ່ພໍມາເຖິງປີ 2018 ສິນຄ້າທຸກປະເພດທີ່ສົ່ງໄປສະຫະພາບເອີຣົບ, ນໍອກແວ ແລະ ສະວິດ ແມ່ນຕ້ອງອອກດ້ວຍຕົນເອງເທົ່ານັ້ນ.

ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 13,648,881.02 ໂດລາສະຫະລັດ, ຮອງລົງມາແມ່ນ ເກີບ (ລະຫັດພາສີ 6403) ມູນຄ່າ 10,379,030.38 ໂດລາສະຫະລັດ, ແລະ ແຜ່ນແພທີ່ເຮັດດ້ວຍເສັ້ນໄຍສັງເຄາະ (ລະຫັດພາສີ 5513) ມູນຄ່າ 4,441,570.00 ໂດລາສະຫະລັດ.

ສໍາລັບປະເທດທີ່ມີມູນຄ່າການສົ່ງອອກຫຼາຍສາມອັນດັບຕົ້ນໃນປີ 2018 ແມ່ນ ຍີ່ປຸ່ນ, ຕວກກີ ແລະ ອາເມລິກາ; ຊຶ່ງມີມູນຄ່າ 33,383,004.59 ໂດລາສະຫະລັດ, 4,523,090.00 ໂດລາສະຫະລັດ ແລະ 861,609.00 ໂດລາສະຫະລັດ ຕາມລໍາດັບ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດທີ່ໃຫ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP) ສໍາລັບຜະລິດຕະພັນທົ່ວໄປ ໃນປີ 2018 ກັບ 2017 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນແມ່ນມີພຽງປະເທດຕວກກີ ເພີ່ມຂຶ້ນເຖິງ 114.23%. ສ່ວນປະເທດທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ຍີ່ປຸ່ນ, ອາເມລິກາ, ການາດາ ແລະ ອິດສະຕາລີ, ຊຶ່ງມີເປີເຊັນການຫຼຸດລົງ 63.07%, 56.49%, 48.61% ແລະ 28.61% ຕາມລໍາດັບ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 08, 09 ແລະ ເອກະສານຊ້ອນທ້າຍ 03)

**ຕາຕະລາງ 08:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
| 1 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 13,648,881.02 | 24,886,412.76 |
| 2 | 6403 | ເກີບທີ່ມີພື້ນນອກທີ່ເຮັດດ້ວຍຢາງ, ພລາສຕິກ, ໜັງຟອກ ຫຼື ໜັງອັດ ແລະ ເບື້ອງເທິງເຮັດດ້ວຍໜັງຟອກ. | 10,379,030.38 | 57,576,693.01 |

[4] ສໍາລັບ ສະຫະລັດອາເມລິກາ ແມ່ນບໍ່ຕ້ອງການແບບຟອມ A. ຖ້າຫາກມີຄວາມຕ້ອງການຟອມ A ແມ່ນເພື່ອໃຫ້ລະບຸຂໍ້ມູນລາຍລະອຽດ ກ່ຽວກັບ ການຜະລິດ ຫຼື ການປຸງແຕ່ງຢ່າງພຽງພໍຂອງສິນຄ້າເທົ່ານັ້ນ, ເຊິ່ງຄວາມຕ້ອງການດັ່ງ ກ່າວແມ່ນຂຶ້ນກັບພາສີຂອງເມືອງນັ້ນໆ.

| | | | | |
|---|---|---|---|---|
| 3 | 5513 | ແຜ່ນແພທີ່ເຮັດດ້ວຍເສັ້ນໄຍສັ້ນສັງເຄາະ, ທີ່ມີເສັ້ນໄຍດັ່ງກ່າວນ້ອຍກວ່າ 85% ໂດຍນໍ້າ ໜັກ, ປະສົມດ້ວຍຝ້າຍລ້ວນໆ ຫຼື ເປັນສ່ວນໃຫຍ່, ໜັກບໍ່ເກີນ 170 ກຣາມ/ມ2. | 4,441,570.00 | 1,358,354.10 |
| 4 | 6203 | ຊຸດສູດສຳລັບຜູ້ຊາຍ ຫຼື ເດັກຊາຍ, ເຄື່ອງນຸ່ງປະກອບກັນເປັນຊຸດ,ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 2,395,586.27 | 9,658,315.40 |
| 5 | 6204 | ຊຸດສູດ ສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງທີ່ປະກອບກັນເປັນຊຸດ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດກະໂປ່ງ, ກະ ໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງ ທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ ແລະ ໂສ້ງຂາສັ້ນ (ນອກຈາກຊຸດນຸ່ງລອຍນໍ້າ). | 1,672,352.15 | 5,536,615.55 |
| 6 | 6206 | ເສື້ອບລາວສ໌ ສຳລັບແມ່ຍິງ ຫຼື ເດັກຍິງ, ເສື້ອເຊີດທ໌ ແລະ ເສື້ອເຊີດທ໌ບລາວສ໌. | 1,416,437.71 | 5,322,133.31 |
| 7 | 6205 | ເສື້ອເຊີດທ໌ ສຳລັບຜູ້ຊາຍ ຫຼື ເດັກຊາຍ. | 1,072,090.10 | 3,459,086.40 |
| 8 | 6104 | ຊຸດສູດສຳລັບແມ່ຍິງ ຫຼື ເດັກຍິງ, ເຄື່ອງນຸ່ງລວມຊຸມ, ເສື້ອແຈັກເກັດ, ເສື້ອເບລເຊີຣ໌, ຊຸດເສື້ອກະໂປ່ງ, ກະໂປ່ງ, ກະໂປ່ງໂສ້ງ, ໂສ້ງຂາຍາວ, ໂສ້ງທີ່ມີອ້ຽງ ແລະ ສາຍພາດບ່າ, ໂສ້ງຂາສາມສ່ວນ, ໂສ້ງຂາສັ້ນ (ນອກຈາກໂສ້ງນຸ່ງອາບນໍ້າ), ທີ່ຖັກແບບນິດ ຫຼື ແບບໂຄຣເຊັດທ໌. | 784,310.00 | 1,176,090.00 |
| 9 | 0710 | ຈຳພວກຜັກຜັກ (ບໍ່ທັນສຸກ ຫຼືເຮັດໃຫ້ສຸກດ້ວຍການຕົ້ມ ຫຼື ການໜຶ້ງ), ແຊ່ແຂງ. | 564,893.00 | - |
| 10 | 6305 | ກະສອບ ແລະ ຖົງ, ທີ່ໃຊ້ເປັນສິ່ງຫຸ້ມຫໍ່ ຫຼື ບັນຈຸເຄື່ອງຂອງ. | 461,631.31 | 100,488.14 |
| 11 | ອື່ນໆ | | 2,090,589.08 | 45,734,065.49 |
| **ລວມ** | | | **38,927,371.02** | **154,808,254.16** |

**ຕາຕະລາງ 09:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດທາງການຄ້າແບບທົ່ວໄປ (GSP)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | **2018** | **2017** |
| 1 | ຍີ່ປຸ່ນ | 33,383,004.59 | 90,405,848.16 |
| 2 | ຕວກກີ | 4,523,090.00 | 2,111,282.64 |
| 3 | ອາເມລິກາ | 861,609.00 | 1,980,316.93 |

| | | | |
|---|---|---|---|
| 4 | ການາດາ | 89,307.03 | 173,780.78 |
| 5 | ອິດສະຕາລີ | 70,360.40 | 98,564.00 |
| 6 | ອື່ນໆ | - | 60,038,461.65 |
| **ລວມ** | | **38,927,371.02** | **154,808,254.16** |

### 2.3.4 ສັນຍາການຄ້າດ້ານສິນຄ້າຂອງອາຊຽນ/ສັນຍາການຄ້າເສລີອາຊຽນ (ຟອມ D)

ໃນປີ 2018 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆຂອງ ສປປ ລາວ ໄປຍັງ 09 ປະເທດສະມາຊິກອາຊຽນ ໂດຍນໍາໃຊ້ສິດທິພິເສດທາງການຄ້າ (ຟອມ D) ມີມູນຄ່າສູງເຖິງ 552,517,342.37ໂດລາສະຫະລັດ, ຊຶ່ງແບບຟອມນີ້ ເປັນແບບຟອມທີ່ມີການນໍາໃຊ້ຫຼາຍທີ່ສຸດໃນປີນີ້. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 79,115,876.00 ໂດລາສະຫະລັດ, ຮອງລົງມາແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 71,089,508.99 ໂດລາສະຫະລັດ, ແລະ ພະລັງງານໄຟຟ້າ (ລະຫັດພາສີ 2716) ມູນຄ່າ 66,144,866.30 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2018 ກັບ 2017 ເຫັນວ່າ ມີມູນຄ່າການສົ່ງອອກຫຼຸດລົງ 21.23%.

ສໍາລັບປະເທດທີ່ ສປປ ລາວ ມີການສົ່ງອອກໃນປີ 2018, ຊຶ່ງວ່າມູນຄ່າສົ່ງອອກຫຼາຍກວ່າໝູ່ 03 ອັນດັບຕົ້ນ ແມ່ນ ໄທ ມູນຄ່າ 364,846,984.13 ໂດລາສະຫະລັດ, ຮອງລົງມາແມ່ນ ສສ.ຫວຽດນາມ ມູນຄ່າ 166,416,171.26 ໂດລາສະຫະລັດ, ແລະ ຟີລິບປິນ ມູນຄ່າ 8,912,778.41 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກອາຊຽນ ໃນປີ 2018 ກັບ 2017 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນຫຼາຍ ແມ່ນ ສິງກະໂປ, ຟີລິບປິນ ແລະ ມາເລເຊຍ. ໂດຍມີອັດຕາເພີ່ມຂຶ້ນແມ່ນ 122.53%, 116.19%, ແລະ 39.23% ຕາມລໍາດັບ. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ກໍາປູເຈຍ -76.71%, ໄທ -34.07%, ແລະ ອິນໂດເນເຊຍ 19.71%.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 10, 11 ແລະ ເອກະສານຊ້ອນທ້າຍທີ 04)

**ຕາຕະລາງ 10:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ຟອມ D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດ ພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
| 1 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຮາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; ແກນ ສາຄູ. | 79,115,876.00 | 159,957,621.20 |
| 2 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 71,089,508.99 | 134,260,165.01 |
| 3 | 2716 | ພະລັງງານໄຟຟ້າ. | 66,144,866.30 | 46,464,824.16 |
| 4 | 4001 | ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກໍາທໍາມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 59,175,991.14 | 70,167,736.54 |

| | | | | |
|---|---|---|---|---|
| 5 | 2523 | ຊີມັງ ພອດແລນ, ຊີມັງ ອະລູມີນັສ, ຊີມັງ ສະແລັກ, ຊີມັງ ຊຸເປີຊ໌ຊັລເຟດທ໌ ແລະ ຊີມັງ ໄຮດຣໍລິກ ທີ່ຄ້າຍຄືກັນ, ຈະແຕ່ງສີ ຫຼື ເປັນຊີມັງເມັດ (ຄລິງເກີຣ໌) ຫຼື ບໍ່ກໍ່ຕາມ. | 57,450,727.28 | 40,549,952.32 |
| 6 | 0704 | ກະລໍ່າປີ, ດອກກະລໍ່າປີ, ກະລໍ່າກູດ, ຜັກຈຳພວກຜັກກາດຂາວ ແລະພືດຜັກທີ່ຄ້າຍຄືກັນໃນຕະກູນບຣາສສິກາ, ສົດ ຫຼື ແຊ່ເຢັນ ທີ່ສາມາດບໍລິໂພກໄດ້. | 30,531,400.00 | 46,103,360.00 |
| 7 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະ ເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 19,489,121.69 | 23,226,577.46 |
| 8 | 8544 | ເສັ້ນລວດ ແລະ ເຄເບີລ (ລວມທັງເຄເບີລຮ່ວມແກ່ນ) ທີ່ຫຸ້ມດ້ວຍວັດຖຸຕ້ານກັບການຮົ່ວຂອງກະແສສຳລັບໄຟຟ້າ (ລວມເຖິງຊະນິດທີ່ເຄືອບດ້ວຍນ້ຳກ້ຽງ ຫຼື ໃສ່ອົກຊີ ຫຼື ບໍ່ກໍ່ຕາມ), ຈະຕິດກັບຂົ້ວັນຕໍ່ ຫຼື ບໍ່ກໍ່ຕາມ; ເຄເບີລໃຍນຳແສງ, ປະກອບດ້ວຍໃຍທີ່ຫຸ້ມປອກແຕ່ລະເສັ້ນ ຈະມີວັດຖຸຕົວນຳໄຟຟ້າ ຫຼື ຕິດກັບຂົ້ວັນຕໍ່ ຫຼື ບໍ່ກໍ່ຕາມ. | 17,292,217.60 | 16,297,726.08 |
| 9 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 14,128,172.41 | 5,118,667.00 |
| 10 | 1701 | ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 12,917,567.32 | - |
| 11 | ອື່ນໆ | | 125,181,893.64 | 159,299,023.88 |
| **ລວມ** | | | **552,517,342.37** | **701,445,653.65** |

**ຕາຕະລາງ 11:** ປະເທດສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ຟອມ D)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ຊື່ປະເທດ | ມູນຄ່າສົ່ງອອກ | |
|---|---|---|---|
| | | 2018 | 2017 |
| 1 | ໄທ | 364,846,984.13 | 553,369,405.89 |
| 2 | ສສ. ຫວຽດນາມ | 166,416,171.26 | 119,856,468.87 |
| 3 | ຟີລິບປິນ | 8,912,778.41 | 4,122,599.20 |
| 4 | ມາເລເຊຍ | 7,149,644.42 | 5,135,102.61 |
| 5 | ກຳປູເຈຍ | 4,086,415.94 | 17,545,922.56 |
| 6 | ອິນໂດເນເຊຍ | 947,900.45 | 1,180,643.22 |

| | | | |
|---|---|---|---|
| 7 | ສິ່ງກະໂປ | 157,447.76 | 70,752.40 |
| 8 | ອື່ນໆ | - | 164,758.90 |
| **ລວມ** | | **552,517,342.37** | **701,445,653.65** |

## 2.3.5 ສັນຍາການຄ້າເສລີ ອາຊຽນ - ສປ ຈີນ (ຟອມ E)

ໃນປີ 2018 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ສປ ຈີນ ໂດຍນໍາໃຊ້ສັນຍາການຄ້າເສລີ ອາຊຽນ-ສປ ຈີນ (ຟອມ E) ມີມູນຄ່າ 236,076,305.90 ໂດລາສະຫະລັດ ເມື່ອທຽບໃສ່ປີ 2017 ເຫັນວ່າ ເພີ່ມຂຶ້ນຫຼາຍສູງເຖິງ 215.32%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າ 03 ລາຍການສິນຄ້າສົ່ງອອກຫຼັກແມ່ນ ຝຸ່ນ/ປຸ໋ຍ (ລະຫັດພາສີ 3104) ມູນຄ່າ 59,562,241.23 ໂດລາສະຫະລັດ, ຮອງລົງມາແມ່ນ ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້ (ລະຫັດພາສີ 4702) ມູນຄ່າ 44,763,300.00 ໂດລາສະຫະລັດ ແລະ ຢາງທໍາມະຊາດ (ລະຫັດພາສີ 4001) ມູນຄ່າ 33,276,383.40 ໂດລາສະຫະລັດ, ແລະ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 9,791,249.42 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2018 ກັບ 2017 ເຫັນວ່າ ມີສິນຄ້າທີ່ເກີດຂຶ້ນໃໝ່ໃນຂອບສັນຍານີ້ໄດ້ແກ່ ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້ (ລະຫັດພາສີ 4702), ນໍ້າຕານທີ່ໄດ້ຈາກອ້ອຍ (ລະຫັດພາສີ 1701), ແຮ່ທອງ ແລະ ຫົວແຮ່ດັ່ງກ່າວ (ລະຫັດພາສີ 2603) ແລະ ອື່ນໆອີກຫຼາຍລາຍການ. ສໍາລັບສິນຄ້າທີ່ມີອັດຕາເພີ່ມຂຶ້ນສູງຫຼາຍໃນປີ 2018 ປະກອບມີ: ຢາງປັບສະພາບ (ຣີເຄລມ) ໃນຮູບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ (ລະຫັດພາສີ 3901), ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສໍາລັບປູພື້ນແບບປາກເກທີ່ບໍ່ທັນປະກອບເຂົ້າກັນ) (ລະຫັດພາສີ 4409) ແລະ ຄລໍໄຣດ໌ (ລະຫັດພາສີ 2827), ຊຶ່ງມີເປີເຊັນທີ່ເພີ່ມຂຶ້ນຄື: 2,195.37%, 1,767.19% ແລະ 83.33% ຕາມລໍາດັບ. ສໍາລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສປ ຈີນ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 12 ແລະ ເອກະສານຊ້ອນທ້າຍທີ 05)

**ຕາຕະລາງ 12:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີ ອາຊຽນ - ສປ ຈີນ (ຟອມ E)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
| 1 | 3104 | ປຸ໋ຍ ໄດ້ຈາກແຮ່ ຫຼື ປຸ໋ຍເຄມີ, ທີ່ມີສ່ວນປະສົມໂພແທສຊຽມ. | 59,562,241.23 | 22,642,746.86 |
| 2 | 4702 | ເຍື່ອໄມ້ເຄມີ, ຊະນິດລະລາຍໄດ້. | 44,763,300.00 | - |
| 3 | 4001 | ຢາງທໍາມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກໍາທໍາມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 33,276,383.40 | 15,613,730.50 |
| 4 | 1701 | ນໍ້າຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນໍ້າຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 19,413,188.37 | - |
| 5 | 2603 | ແຮ່ທອງ ແລະ ຫົວແຮ່ດັ່ງກ່າວ. | 15,668,975.00 | - |
| 6 | 3901 | ຢາງປັບສະພາບ (ຣີເຄລມ) ໃນຮູບລັກສະນະຂັ້ນຕົ້ນ ຫຼື ເປັນ | 12,808,161.28 | 558,000.00 |

| | | | | |
|---|---|---|---|---|
| | | ແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | | |
| 7 | 2827 | ຄລໍໄຣດ໌, ຄລໍໄຣດ໌ ອອກໄຊດ໌ ແລະຄລໍໄຣດ໌ໄຮດຣອກໄຊດ໌; ໂບຣໄມດ໌ ແລະໂບຣໄມດ ອອກໄຊດ໌; ໄອໂອໄດດ໌ ແລະ ໄອໂອໄດດ໌ ອອກໄຊດ໌. | 9,941,601.00 | 3,508,900.00 |
| 8 | 1212 | ໝາກຖົ່ວໂລຄັສທ໌, ສາຫຼ່າຍທະເລ ແລະ ສາຫຼ່າຍທະເລອື່ນໆ , ຜັກກາດຫວານທີ່ໃຫ້ນ້ຳຕານ ແລະ ອ້ອຍສົດ, ແຊ່ເຢັນແຊ່ແຂງ ຫຼື ແຫ້ງ, ຈະບົດເປັນຜົງ ຫຼື ບໍ່ກໍ່ຕາມ; ເມັດແຂງ ແລະ ເນື້ອໃນຂອງແກ່ນໝາກໄມ້ ແລະ ຜະລິດຕະພັນອື່ນໆ ທີ່ໄດ້ຈາກພຶດຜັກ (ລວມທັງຮາກຊິໂຄຣີບໍ່ທັນຂົ້ວ, ຊະນິດຊິໂຄຣຽມ ອິນທີບັສຊາຕີວຸມ) ໃຊ້ເປັນອາຫານຄົນເປັນຕົ້ນຕໍ, ທີ່ບໍ່ໄດ້ລະບຸ ຫຼື ລວມໄວ້ໃນບ່ອນອື່ນ. | 8,522,799.00 | 3,181,727.04 |
| 9 | 7403 | ທອງບໍລິສຸດ ແລະ ທອງປະສົມເປັນເນື້ອດຽວ, ທີ່ຍັງບໍ່ໄດ້ຂຶ້ນຮູບຮ່າງ. | 6,047,441.79 | 9,791,249.42 |
| 10 | 4409 | ໄມ້ (ລວມທັງແຜ່ນ ແລະ ໄມ້ລວດລາຍສຳລັບປູພື້ນແບບປາເກ ທີ່ບໍ່ທັນປະກອບເຂົ້າກັນ) ທີ່ມີຂອບ ປາຍ ຫຼືໜ້າໄມ້ເຮັດເປັນຮູບຊົງແບບຕໍ່ເນື່ອງ (ເຮັດເປັນລີ້ນ, ຮ່ອງ, ລ່ອງ, ມຸມສະຫຼຽງ, ຂໍ້ຕໍ່ຮູບຕົວວີ, ຄິ້ວ, ຂອບ, ເຮັດໃຫ້ມົນ ຫຼື ລັກສະນະຄ້າຍຄຽງ) ຈະກົບ, ຂັດ, ເຂົ້າຫຼົ້ມ ຫຼື ບໍ່ກໍ່ຕາມ. | 3,778,426.92 | 202,359.40 |
| 11 | ອື່ນໆ | | 22,293,787.91 | 19,368,919.79 |
| **ລວມ** | | | **236,076,305.90** | **74,867,633.01** |

### 2.3.6 ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ. ຫວຽດນາມ (ຟອມ S)

ໃນປີ 2018 ເຫັນວ່າ ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ ສສ.ຫວຽດນາມ ໂດຍນຳໃຊ້ສິດທິພິເສດທາງການຄ້າໂດຍນຳໃຊ້ຟອມ S ມີມູນຄ່າ 161,227,183.21 ໂດລາສະຫະລັດ, ຊຶ່ງທຽບໃສ່ມູນຄ່າການສົ່ງອອກໃນປີ 2017 ມີມູນຄ່າ 150,691,827.51 ໂດລາສະຫະລັດ ເຫັນວ່າ ເພີ່ມຂຶ້ນເລັກໜ້ອຍພຽງ 6.99%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 10, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ກາເຟ (ລະຫັດພາສີ 0901) ມູນຄ່າ 49,793,048.98 ໂດລາສະຫະລັດ, ຮອງລົງມາແມ່ນ ຢາງທຳມະຊາດ (ລະຫັດພາສີ 4001) ມູນຄ່າ 26,355,683.36 ໂດລາສະຫະລັດ, ແລະ ຫົວມັນຕົ້ນ (ລະຫັດພາສີ 0714) ມູນຄ່າ 21,035,894.13 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າຂອງລາຍການສິນຄ້າສົ່ງອອກຂອງປີ 2018 ກັບ 2017 ເຫັນວ່າ ມີຫຼາຍລາຍການສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນເປັນຕົ້ນແມ່ນ ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ (ລະຫັດພາສີ 0714) ເພີ່ມຂຶ້ນ 63.91%, ຢາງທຳມະຊາດ (ລະຫັດພາສີ 4001) ເພີ່ມຂຶ້ນ 35.17% ແລະ ຫົວມັນຕົ້ນ (ລະຫັດພາສີ 0714) ເພີ່ມຂຶ້ນ 21,50%. ໃນຂະນະດຽວກັນສິນຄ້າທີ່ມີມູນຄ່າການສົ່ງອອກຫຼຸດລົງແມ່ນ ໝາກໄມ້ສົດອື່ນໆ (ລະຫັດພາສີ 0810) ຫຼຸດລົງ 52.65%. ສັດປະເພດງົວຄວາຍ (ລະຫັດພາສີ 1020) ຫຼຸດລົງ 30.26%, ນ້ຳຕານທີ່ໄດ້ຈາກອ້ອຍ (ລະຫັດພາສີ 1701), ແລະ ກາເຟ (ລະຫັດພາສີ 0901) ຫຼຸດລົງ 18.03%. ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສສ.ຫວຽດນາມ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 13 ແລະ ເອກະສານຊ້ອນທ້າຍທີ 06)

**ຕາຕະລາງ 13:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ຂໍ້ຕົກລົງວ່າດ້ວຍລະບຽບແຫຼ່ງກຳເນີດສິນຄ້ານຳໃຊ້ຕໍ່ສິນຄ້າທີ່ໄດ້ບູລິມາສິດອັດຕາພາສີນຳເຂົ້າ - ສົ່ງອອກ ສປປ ລາວ ແລະ ສສ. ຫວຽດນາມ (ຟອມ S)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
| 1 | 0901 | ກາເຟ, ຈະຂົ້ວຫຼື ແຍກຄາເຟອີນອອກ ຫຼືບໍ່ກໍ່ຕາມ; ເປືອກ ແລະ ເຫຍື້ອກາເຟ; ສິ່ງໃຊ້ແທນກາເຟທີ່ມີກາເຟປະສົມຢູ່, ຈະຢູ່ໃນອັດຕາສ່ວນປະສົມເທົ່າໃດກໍຕາມ. | 49,793,048.98 | 60,745,178.26 |
| 2 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງກຳທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຍາວ. | 26,355,683.36 | 19,497,469.08 |
| 3 | 0714 | ມັນຕົ້ນ, ມັນເທດ, ມັນດ້າງ, ສາເລບ, ເຈຣູຊາແລມ ອາຣຕິໂຊກ ແລະ ຣາກ ຫຼື ຫົວພືດທີ່ມີສ່ວນປະກອບຂອງແປ້ງສະຕາດຈ໌ ຫຼື ແປ້ງອີນູລິນສູງ, ສົດ, ແຊ່ເຢັນ, ແຊ່ແຂງ ຫຼື ແຫ້ງ, ຈະຊອຍເປັນແຜ່ນບາງ ຫຼື ອັດເປັນເມັດແບບເພລເລດທ໌ຫຼືບໍ່ກໍ່ຕາມ; | 21,035,894.13 | 17,313,395.00 |
| 4 | 1701 | ນ້ຳຕານທີ່ໄດ້ຈາກອ້ອຍ ຫຼື ຈາກຫົວຜັກກາດຫວານ ແລະ ນ້ຳຕານຊູໂຄຣສ ບໍລິສຸດທາງເຄມີ, ໃນສະພາບເປັນກ້ອນແຂງ. | 12,584,208.50 | 7,677,432.00 |
| 5 | 2520 | ຫີນກາວຢິບຊຳ; ແອນໄຮໄດຣທ໌; ພລາສເຕີຣ໌ (ຊຶ່ງປະກອບດ້ວຍຫີນກາວຢິບຊຳ້ທີ່ຜ່ານການເຜົາໃໝ້ ຫຼື ແຄລຊຽມຊັລເຟດທ໌) ຈະແຕ່ງສີ ຫຼື ຕື່ມຕົວເລັ່ງ ຫຼື ຕົວກົດໜ່ວງໃນປະລິມານນ້ອຍ ຫຼື ບໍ່ກໍ່ຕາມ. | 10,510,250.00 | 9,615,380.00 |
| 6 | 1006 | ເຂົ້າ. | 6,558,450.00 | 5,802,310.00 |
| 7 | 0102 | ສັດປະເພດງົວຄວາຍທີ່ມີຊີວິດ. | 5,491,340.00 | 7,873,470.00 |
| 8 | 9403 | ເຄື່ອງເຟີນີເຈີອື່ນໆ ແລະ ສ່ວນປະກອບຂອງສິ່ງດັ່ງກ່າວ. | 5,155,448.25 | - |
| 9 | 2716 | ພະລັງງານໄຟຟ້າ. | 5,109,350.28 | - |
| 10 | 0810 | ໝາກໄມ້ອື່ນໆ, ສົດ. | 3,601,698.40 | 7,606,756.65 |
| 11 | ອື່ນໆ | | 15,031,811.31 | 14,560,436.52 |
| **ລວມ** | | | **161,227,183.21** | **150,691,827.51** |

## 2.3.7 ສິດທິພິເສດການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (ຟອມ SPT)

ໃນປີ 2018 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງ ສປ ຈີນ ໂດຍນຳໃຊ້ສິດທິພິເສດທາງການຄ້າ ໂດຍນຳໃຊ້ຟອມ SPT ມີມູນຄ່າ 14,875,840.00 ໂດລາສະຫະລັດ ເມື່ອທຽບໃສ່ປີ 2017 ເຫັນວ່າ ຫຼຸດລົງເຖິງ -18.51%. ໃນນັ້ນ, ໄດ້ມີສິນຄ້າເກີດຂຶ້ນມາໃໝ່ໃນຂອບສັນຍານີ້ ແມ່ນ ໝາກກ້ວຍ (ລະຫັດພາສີ 0803) ມີມູນຄ່າການສົ່ງອອກ 43,921.00 ໂດລາສະຫະລັດ. ສຳລັບການສົ່ງອອກຢາງທຳມະຊາດ (ລະຫັດພາສີ 4001) ແມ່ນມີປະລິມານຫຼຸດລົງ 18.75%. ສຳລັບປະເທດທີ່ ສປປ ລາວ ສົ່ງອອກພາຍໃຕ້ສັນຍານີ້ມີພຽງ ສປ ຈີນ ເທົ່ານັ້ນ.

(ລາຍລະອຽດສາມາດເບິ່ງຕາມຕາຕະລາງ 14 ແລະ ເອກະສານຊ້ອນທ້າຍທີ 07)

**ຕາຕະລາງ 14:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສິດທິພິເສດການຄ້າແບບຝ່າຍດຽວຈາກ ສປ ຈີນ ພາຍໃຕ້ລະບົບອັດຕາພາສີພິເສດ (ແບບຟອມ SPT)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
| 1 | 0803 | ໝາກກ້ວຍ, ລວມທັງໝາກໄມ້ຕະກູນກ້ວຍ, ສົດ ຫຼື ແຫ້ງ. | 43,921.00 | - |
| 2 | 4001 | ຢາງທຳມະຊາດ, ບາລາຕາ, ກັດຕາ-ເປີຣ໌ຊາ, ກວາຍູ, ຊິເຄິລ ແລະ ຢາງທຳມະຊາດຄ້າຍຄືກັນ, ໃນຮູບແບບລັກສະນະຂັ້ນຕົ້ນ ຫຼື ເປັນແຜ່ນ, ແຜ່ນບາງ ຫຼື ເປັນເສັ້ນແປຢາວ. | 14,831,919.00 | 18,254,705.00 |
| ລວມ | | | 14,875,840.00 | 18,254,705.00 |

## 2.3.8 ສັນຍາການຄ້າເສລີ ອາຊຽນ - ອິນເດຍ (ຟອມ AI)

ໃນປີ 2018 ການສົ່ງອອກສິນຄ້າປະເພດຕ່າງໆໄປຍັງບັນດາປະເທດສະມາຊິກອາຊຽນ ແລະ ອິນເດຍ ໂດຍນຳໃຊ້ສິດທິພິເສດທາງການຄ້າພາຍໃຕ້ຟອມ AI ມີມູນຄ່າ 16,365,429.07 ໂດລາສະຫະລັດ ເມື່ອທຽບໃສ່ປີ 2017 ເຫັນວ່າ ຫຼຸດລົງຫຼາຍພໍສົມຄວນ 27.94%. ໃນນັ້ນ, ໄດ້ສັງລວມລາຍການສິນຄ້າທີ່ມີການສົ່ງອອກຫຼາຍກວ່າໝູ່ແຕ່ອັນດັບທີ 01 ເຖິງ 08, ຊຶ່ງວ່າສາມລາຍການສິນຄ້າສົ່ງອອກຫຼັກແມ່ນ ທອງບໍລິສຸດ (ລະຫັດພາສີ 7403) ມູນຄ່າ 11,636,845.44 ໂດລາສະຫະລັດ, ຮອງລົງມາແມ່ນ ໄມ້ອັດ (ລະຫັດພາສີ 4412) ມູນຄ່າ 3,629,655.40 ໂດລາສະຫະລັດ ແລະ ກົ່ວທີ່ຍັງບໍ່ທັນຂຶ້ນຮູບ (ຫຍາບ) (ລະຫັດພາສີ 8001) ມູນຄ່າ 528,162.00ໂດລາສະຫະລັດ. ໃນປີ 2018 ສັງເກດເຫັນວ່າ ຈຳນວນສິນຄ້າສົ່ງອອກທີ່ເກີດຂຶ້ນໃໝ່ ປະກອບມີ: ກົ່ວທີ່ຍັງບໍ່ທັນຂຶ້ນຮູບ (ຫຍາບ) (ລະຫັດພາສີ 8001), ຂີ້ຄັ່ງ (ລະຫັດພາສີ 1310), ເຄື່ອງປະກອບອາຄານທີ່ເຮັດດ້ວຍໄມ້ (ລະຫັດພາສີ 4418) ແລະ ແບຮຽມຊັລເຟດທ໌ທຳມະຊາດ (ແບໄຣທ໌) (ລະຫັດພາສີ 2511). ສຳລັບສິນຄ້າທີ່ມີມູນຄ່າການສົ່ງອອກເພີ່ມຂຶ້ນໃນປີ 2018 ມີພຽງ ທອງບໍລິສຸດ (ລະຫັດພາສີ 7403) ເພີ່ມຂຶ້ນ 15.60%.

ສຳລັບປະເທດທີ່ສົ່ງອອກພາຍໃຕ້ສິດທິພິເສດດັ່ງກ່າວໃນປີນີ້ແມ່ນມີ 03 ປະເທດຄື: ອິນເດຍ ມູນຄ່າ 4,707,566.55 ໂດລາສະຫະລັດ ແລະ ໄທ ມູນຄ່າ 11,640,595.44 ໂດລາສະຫະລັດ ແລະ ສິງກະໂປ ມູນຄ່າ 17,267.08 ໂດລາສະຫະລັດ. ເມື່ອສົມທຽບມູນຄ່າການສົ່ງອອກໄປຍັງບັນດາປະເທດສະມາຊິກ ໃນປີ 2018 ກັບ 2017 ເຫັນວ່າມີການສົ່ງອອກທີ່ເພີ່ມຂຶ້ນແມ່ນ ໄປ ໄທ ເພີ່ມຂຶ້ນ 15.63%. ສ່ວນປະເທດທີ່ມີເປີເຊັນຫຼຸດລົງແມ່ນ ອິນເດຍ ຫຼຸດລົງເຖິງ 62.77%.

(ລາຍລະອຽດສາມາດເບິ່ງຕາມເອກະສານຄັດຕິດທີ 15, 16 ແລະ ເອກະສານຊ້ອນທ້າຍທີ 08)

**ຕາຕະລາງ 15:** ສິນຄ້າສົ່ງອອກຫຼັກຂອງ ສປປ ລາວ ພາຍໃຕ້ສັນຍາການຄ້າເສລີອາຊຽນ - ອິນເດຍ (ຟອມ AI)

(ຫົວໜ່ວຍເປັນໂດລາສະຫະລັດ: USD)

| ລ/ດ | ລະຫັດພາສີ | ຊື່ສິນຄ້າ | ມູນຄ່າສົ່ງອອກ | |
|---|---|---|---|---|
| | | | 2018 | 2017 |
